ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 07 ຫາ 11 ຕຸລາ 2024




ພິທີເປີດ ພິພິທະພັນ ນ້ຳປຽນຍໍລະປ່າ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີເປີດ ພິພິທະພັນ ຊີວະນານາພັນ ນ້ຳປຽນຢໍລະປ່າ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ເພື່ອເປັນການອະນຸລັກ, ສົ່ງເສີມ, ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນປ່າໄມ້ ເວົ້າລວມ, ເວົ້າສະເພາະກໍຄື ຊີວະນາໆພັນ ໃນເຂດທີ່ດິນປ່າໄມ້ ຕາມທິດສີຂຽວ ແລະ ຍືນຍົງ. ສະນັ້ນ,ໃນວັນທີ 05 ຕຸລາ 2024 ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ, ທ່ານ ນ. ບຸນຄຳ ວໍລະຈິດ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ພ້ອມນີ້ ມີບັນດາທ່ານການນຳທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມພິທີເປີດ ພິພິທະພັນ ຊີວະນານາພັນ ນ້ຳປຽນຢໍລະປ່າ ທີ່ເປີດນຳໃຊ້ຢ່າງເປັນທາງການ.

ທ່ານ ສິນເພັດ ມ້າວປະເສີດ ປະທານບໍລິສັດ ແຟເຊັດທ່ອງທ່ຽວທຳມະຊາດ ໄດ້ຂຶ້ນສະເໜີປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ ນ້ຳປຽນຢໍລະປ່າ ໃຫ້ຮູ້ວ່າ: ນ້ຳປຽນຢໍລະປ່າ ຕັ້ງຢູ່ ບ້ານຊຽງແລທ່າ, ເມືອງປາກງື່ມ, ນະຄອນຫຼວງວຽງຈັນ. ຊຶ່ງ ໄດ້ຮັບການອະນຸຍາດລົງທຶນຈາກອຳນາດການປົກຄອງນະຄອນຫຼວງວຽງຈັນ ໃນປີ 2018 ແລະ ໄດ້ດຳເນີນການສຳຫຼວດ, ອອກແບບ ແລະ ກໍ່ສ້າງສຳເລັດໃນຂັ້ນພື້ນຖານທີ່ສາມາດເປີດບໍລິການໄດ້ໃນປີ 2020 ໂດຍມີຈຸດປະສົງເປົ້າໝາຍເພື່ອພັດທະນາສະຖານທີ່ທ່ອງທ່ຽວທຳມະຊາດແບບອະນຸລັກ ໂດຍໃຫ້ປະຊາຊົນໄດ້ມີສ່ວນຮ່ວມ. ສຳລັບ ພິພິທະພັນ ຊີວະນານາພັນ ນ້ຳ

ປຽນຍໍລະປ່າ ແມ່ນໄດ້ພັດທະນາຕາມຮູບແບບຂອງນໍາກັດຍໍລະປ່າ ຊຶ່ງຈະມີການຄົ້ນຄວ້າຊີວະນາໆພັນສະເພາະທີ່ມີຢູ່ໃນພື້ນທີ່ປ່າອະນຸລັກເທົ່ານັ້ນ ປະກອບມີ 4 ກຸ່ມຄື: 1. ກຸ່ມງູ, ສັດເລືອຄານ, ສັດນໍ້າ ແລະ ສັດເຄິ່ງບົກເຄິ່ງນໍ້າ; 2. ກຸ່ມແມງໄມ້ຊະນິດຕ່າງໆ ແລະ ແມງກະເບື້ອ; 3. ກຸ່ມນົກ ແລະ ສັດປີກ ແລະ 4. ກຸ່ມດອກກ້ວຍໄມ້. ໃນພິທີດັ່ງກ່າວ ບັນດາທ່ານການນໍາທີ່ເຂົ້າຮ່ວມໄດ້ ຂຶ້ນປະກອບຄໍາຄິດຄໍາເຫັນຊີ້ນໍາ ໂດຍສະເພາະແມ່ນວຽກງານການອະນຸລັກຊີວະນາໆພັນໃຫ້ມີຄວາມຍືນຍົງ ຕາມທິດສີຂຽວ ພ້ອມທັງ ຮ່ວມກັນ ຕັດແຖບຜ້າ ເປີດການນໍາໃຊ້ພິພິທະພັນດັ່ງກ່າວຢ່າງເປັນທາງ. ພ້ອມນີ້ ຍັງໄດ້ສືບຕໍ່ຢ້ຽມຢາມທ່ຽວຊົມຜະລິດຕະພັນພາຍໃນພິທີທະພັນຕື່ມອີກ.








ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄໍາແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;